ປື້ມຄູ່ມືນີ້ເປັນເຄື່ອງມືທີ່ມີປະໂຫຍດ
ຫຼາຍສຳຫຼັບຜູ່ປົກຄອງ ແລະ
ພະນັກງານແພດໝໍໃນການເຂົ້າໃຈ
ອາການໂອທິສຕິກໃຫ້ດີຂື້ນເພື່ອ
ຮູ້ຈັກວິທີຮັບມືທີ່ຖືກຕ້ອງ.

ທ່ານນາງ ໂພຄຳດວງດາລາ
ປະທານສະມາຄົມເພື່ອຄົນໂອທິສຕິກ

ຂ້າພະເຈົ້າໃນນາມທ່ານໝໍປິ່ນປົວ
ທົ່ວໄປ ແລະ ຊ່ຽວຊານຈິດຕະ
ວິທະຍາການແພດ ເຫັນວ່າ
ປື້ມຄູ່ມືເຫຼັ້ມນີ້ ເປັນເຫຼັ້ມທຳອິດ
ໃນປະເທດລາວ ແລະ ເປັນຄູ່ມືທີ່ມີ
ຄູນປະໂຫຍດຫຼາຍສຳຫຼັບແພດໝໍ,
ຜູ້ປົກຄອງ, ຄູອາຈານ ແລະ
ນັ້ກສັງຄົມ ສົງເຄາະທີ່ເຮັດວຽກກັບ
ເດັກນ້ອຍທີ່ ພັດທະນາການຊ້າ.
ປື້ມຄູ່ມືເຫຼັ້ມນີ້ໃຫ້ຂໍ້ມູນທີ່ເຂົ້າໃຈງ່າຍ
ແບບເປັນຮູບພາບ ແລະສາມາດ
ໃຊ້ໃນການສື່ສານແລະເຂົ້າໃຈ
ໄດ້ງ່າຍສຳຫຼັບເດັກທຸກອາຍຸ.

ທ່ານ ໝໍ ມະນີວອນ ທີແກ້ວ,
MDF, MPH, Ph.D.
ຊ່ຽວຊານ ຈິດຕະວິທະຍາການແພດ
ທີ່ປຶກສາ ແລະ ອຳນວຍການ ສູນ ປິ່ນປົວ ໄຊ-ເມດ

ຂ້າພະເຈົ້າໃນນາມທີ່ຜູ້ປົກຄອງເດັກ
ໂອທິສຕິກ ເຫັນວ່າປື້ມຄູ່ມືສະບັບນີ້
ສ້າງຂື້ນເພື່ອສ້າງຄວາມຮັບ ແລະ
ຄວາມເຂົ້າໃຈ ກ່ຽວກັບ ໂອທິສຕິກ
ໃຫ້ແກ່ຜູ້ປົກຄອງ, ແພດຫມໍ, ຄູອາຈານ
ແລະ ສັງຄົມ.
ຂ້າພະເຈົ້າເຊື່ອຫມັ້ນວ່າ ຄວາມຮູ້ ເປັນ
ສິ່ງທີ່ປະເສີດທີ່ສຸດ ແລະ ປຽບເຫມືອນ
ເສັ້ນທາງທີ່ນຳໄປສູ່ຄວາມເຂັ້ມແຂງ.

ທ່ານນາງ ວຽງຊຳ ອິນດາວົງ
ປ.ທ. ທາງດ້ານນະໂຍບາຍສົ່ງເສີມຄົນພິການ



# ປື້ມຄູ່ມື ກ່ຽວກັບອາການ ໂອທິສຕິກ

ສະມາຄົມເພື່ອ ຄົນໂອທິສຕິກ
Association for Autism
www.facebook.com/laoautism.laa

Help Autism Now Society
www.helpautismnow.com

ປຶ້ມ 'ຄູ່ມືກ່ຽວກັບອາການໂອທິສຕິກ'  ໄດ້ຖືກອອກແບບມາເພື່ອສະໜັບສະໜູນໃຫ້ບັນດາຜູ່ໃຫ້ການຊ່ວຍເຫຼືອເບື້ອງຕົ້ນໃຫ້ເດັກໂອທິສຕິກ. ເນື່ອງຈາກບໍ່ມີເຄື່ອງໝາຍຊີ້ວັດທາງດ້ານຊີວະພາບ ( ຕົວຢ່າງ: ບໍ່ສາມາດກວດເຫັນໂອທິສຕິກຜ່ານການກວດເລືອດ) ການທີ່ຈະກວດຫາ ແລະ ບົ່ງມະຕິອາການໂອທິສຕິກນັ້ນ ຈຶ່ງຕ້ອງໄດ້ອີງໃສ່ການສັງເກດພຶດຕິກຳເດັກ ແລະ ການສຶກສາຂໍ້ມູນຂອງເດັກຢ່າງລະອຽດຈາກພໍ່ແມ່ຜູ່ປົກຄອງ.

ປຶ້ມຄູ່ມືສະບັບນີ້ຖືກຮຽບຮຽງໂດຍທ່ານນາງ Linda Lee Rn. ຜູ່ອຳນວຍການໃຫຍ່ຂອງ HANS ໂດຍອີງໃສ່ການປະກອບຄຳຄິດຄຳເຫັນຈາກຜູ່ຊ່ຽວຊານຫຼາຍໆ ທ່ານຈາກຂົງເຂດການສຶກສາ ແລະ ການແພດ.

ແປເປັນພາສາລາວແລະດັດປັບໂດຍສະມາຄົມເພື່ອຄົນໂອທິສຕິກ.

© 2007-2017 ສະຫງວນລິຂະສິດ

Help Autism Now Society
infor@helpautismnow.com
4742 Liberty Road South, # 198
Salem OR 97302, USA

ສະມາຄົມເພື່ອຄົນໂອທິສຕິກ
info@laoautism.org
010 ບ້ານໂພນປ່າເປົ້າ, ເມືອງສີສັດຕະນາກ
ນະຄອນຫຼວງວຽງຈັນ, ສປປ ລາວ

www.helpautismnow.com
www.facebook.com/laoautism.laa

# ສາ ລະ ບານ

ສະມາຄົມເພື່ອ
Association for Autism
ຄົນໂອທິສຕິກ

www.facebook.com/laoautism.laa


| | |
|---|---|
| ໜ້າ 3 | ສາລະບານ |
| ໜ້າ 4 | ຄວາມຂອບໃຈ |
| ໜ້າ 5 | ເມື່ອາຍຸ ໄດ້18ເດືອນ ລູກຂອງທ່ານ ມີພຶດຕິກຳເລົ່ານີ້ບໍ່ ? |
| ໜ້າ 6-7 | CHAT (ແບບຟອມກັ່ນກອງໂອທິສຕິກສຳລັບເດັກນ້ອຍ ອາຍຸຕ່ຳກວ່າ 3 ປີ |
| ໜ້າ 8-15 | ອາການຕ່າງໆ ກ່ຽວກັບພຶດຕິກຳ ຂອງເດັກໂອທິສຕິກ |
| ໜ້າ 9-10 | ບັນຫາດ້ານສັງຄົມ |
| ໜ້າ 11 | ບັນຫາດ້ານການສື່ສານ |
| ໜ້າ 12-15 | ບັນຫາພຶດຕິກຳແປກໆ ຫຼື ພຶດຕິກຳທີ່ເຮັດຊ້ຳໆ |
| ໜ້າ 16-17 | ບັນຫາການເຄື່ອນໄຫວ |
| ໜ້າ 18 | ການຮັບຮູ້ຂອງປະສາດສາດສຳພັດທີ່ຫຼາຍເກີນໄປ |
| ໜ້າ 19-21 | ບັນຫາດ້ານປະສາດສາດສຳພັດ |
| ໜ້າ 22 | ພຶດຕິກຳທຳຮ້າຍຕົນເອງ |
| ໜ້າ 23-25 | ບັນຫາດ້ານຄວາມປອດໄພ |
| ໜ້າ 26 | ຄວາມຜິດປົກກະຕິກ່ຽວກັບລະບົບທາງເດີນອາຫານ |
| ໜ້າ 27 | ຄວາມຜິດປົກກະຕິໃນການນອນ / ການຕອບສະໜອງຕໍ່ຄວາມເຈັບປວດ / ການຊັກ |
| ໜ້າ 28 | ຜົນກະທົບຂອງໂອທິສຕິກຕໍ່ຄອບຄົວ |
| ໜ້າ 29 | ບົດບາດຂອງການຝຶກແອບແຕ່ຫົວທີ |
| ໜ້າ 30 | ສັງລວມບັນດາຊ່ອງທາງທີ່ສາມາດຊ່ວຍເຫຼືອເດັກໂອທິສຕິກ |
| ໜ້າ 31-35 | ວິທີຊ່ວຍເດັກໂອທິສຕິກບໍ່ໃຫ້ກົດດັນ/ຢ້ານເວລາໄປຫາໝໍ |
| ໜ້າ 36 | ອົງການຈັດຕັ້ງ ທີ່ສາມາດໃຫ້ຄຳປຶກສາຫັຜູ້ປົກຄອງໄດ້ |


HANS Help Autism Now Society
www.helpautismnow.com

ສະມາຄົມເພື່ອ
Association for Autism
ຄົນໂອທິສຕິກ

www.facebook.com/laoautism.laa

# ຄວາມຂອບໃຈ

ພວກຂ້າພະເຈົ້າຢາກສະແດງຄວາມຂອບໃຈມາຍັງ ສະມາຄົມ Help Autism Now Society ສໍາລັບທຸກຄົນທີ່ເຮັດວຽກໜັກ ເພື່ອສ້າງປື້ມຄູ່ມືສະບັບນີ້ ແລະ ໄດ້ອະນຸຍາດໃຫ້ພວກຂ້າພະເຈົ້າ ໄດ້ດັດປັບເນື້ອໃນບາງສ່ວນຂອງປື້ມຄູ່ມືນີ້ ເພື່ອໃຫ້ແທດເໝາະ ກັບຄວາມຕ້ອງການ ຂອງ ສະມາຄົມເພື່ອຄົນໂອທິສຕິກ.

ປື້ມຄູ່ມືເຫຼັ້ມນີ້ເປັນແຫຼ່ງຂໍ້ມູນທີ່ສໍາຄັນສໍາລັບສະມາຄົມ ຂອງພວກຂ້າພະເຈົ້າ.

ການເພີ່ມເນື້ອໃນທີ່ສອດຄ່ອງກັບສະພາບຢູ່ ສປປ ລາວ ຈະຊ່ວຍເພີ່ມທະວີຜົນປະໂຫຍດໃຫ້ຫຼາຍໆຄອບຄົວ ທີ່ມີລູກໂອທິສຕິກ.

HANS
Help
Autism
Now
Society
www.helpautismnow.com

ພວກຂ້າພະເຈົ້າຂໍສະແດງຄວາມຮູ້ບຸນຄຸນຕໍ່ໂຄງການ TEAM ຂອງ ອົງການເວີລ໌ດເອດຢູເຄຊັ່ນປະຈໍາລາວທີ່ໄດ້ສະໜັບສະໜູນການຜະລິດ ຂອງປື້ມຄູ່ມືນີ້ສະບັບພາສາລາວ.

ປື້ມຄູ່ມືນີ້ ແມ່ນໄດ້ຖືກຈັດພິມຂຶ້ນໂດຍການສະໜັບສະໜູນຈາກອົງການສຶກສາໂລກ
ພາຍໃຕ້ ຂໍ້ຕົກລົງ ເລກທີ APC-GM-0063, ໂດຍຜ່ານ Advancing
Partners & Communities (APC), ເຊິ່ງເປັນ ຂໍ້ຕົກລົງຮ່ວມມື 5 ປີ
ທີ່ໃຫ້ທຶນ ໂດຍ ອົງການພັດທະນາສາກົນຂອງ U.S. ພາຍໃຕ້ຂໍ້ຕົກລົງ ເລກທີ
AID-OAA-A-12-00047, ເຊິ່ງເລີ່ມຕົ້ນໃນ ວັນທີ 1 ເດືອນຕຸລາ 2012.

USAID FROM THE AMERICAN PEOPLE
WORLD EDUCATION
ADVANCING PARTNERS & COMMUNITIES

Training Economic Empowerment Assistive Technologies Medical and Physical Rehabilitation

# ເມື່ອອາຍຸ ໄດ້18ເດືອນ ລູກຂອງທ່ານ ມີພຶດຕິກຳເລົ່ານີ້ບໍ່ ?



1. ແນມເບິ່ງໜ້າທ່ານ ແລະ ຊີ້ໃສ່ສິ່ງໃດສິ່ງໜຶ່ງ ທີ່ເດັກຕ້ອງການສະແດງໃຫ້ທ່ານເຫັນ?



2. ເບິ່ງຕາມ ເມື່ອ ທ່ານຊີ້ໄປ ໃສ່ສິ່ງໃດສິ່ງໜຶ່ງ?



3. ໃຊ້ຈິນຕະນາການ ເພື່ອລິ້ນ ບົດບາດສົມມຸດໃດໜຶ່ງ?

ຖ້າຄຳຕອບແມ່ນ ບໍ່ ເດັກອາດຈະ ມີຄວາມສ່ຽງຕໍ່ການເປັນ ໂອທິສຕິກ. ໃຫ້ພາເດັກໄປພົບໝໍຊ່ຽວຊານເພື່ອ ຮັບການຊ່ວຍເຫຼືອ.

HANS Help Autism Now Society
www.helpautismnow.com

ອີງໃສ່ ແບບຟອມກັ່ນກອງ ໂອທິສຕິກສຳລັບເດັກນ້ອຍອາຍຸຕ່ຳກວ່າ 3 ປີ (CHAT)

# CHAT (ແບບຟອມກັ່ນກອງໂອທິສຕິກສຳລັບເດັກນ້ອຍອາຍຸຕ່ຳກວ່າ 3 ປີ)

ໜ້າທີ 1 (ແບບຟອມນີ້ໃຊ້ສຳຫຼັບເດັກອາຍຸ 18 ເດືອນຂຶ້ນໄປ)

ໝາຍເຫດ: ແບບຟອມ CHAT ນີ້ ແມ່ນແບບຟອມກັ່ນກອງເອົາຄວາມສ່ຽງຂອງອາການໂອທິສຕິກ, ຖ້າຜົນຂອງການກັ່ນກອງພົບເຫັນຄວາມສ່ຽງແມ່ນໃຫ້ຜູ້ປົກຄອງພາເດັກໄປພົບໝໍຊ່ຽວຊານເພື່ອໃຫ້ການຊ່ວຍເຫຼືອ. ແບບຟອມນີ້ບໍ່ແມ່ນແບບຟອມທີ່ໃຊ້ໄວ້ບົ່ງມະຕິຂອງໂອທິສຕິກ.

ສະມາຄົມເພື່ອ ຄົນໂອທິສຕິກ

Association for Autism

www.facebook.com/laoautism.laa

## ພາກ ກ: ສຳພາດຜູ້ປົກຄອງ

1. ເວລາທ່ານເອົາລູກຂອງທ່ານນັ່ງເທິງຕັກ ແລ້ວຢອກ ເຊັ່ນ ໂຍກໄປໂຍກມາ ຫຼື ຫງ່ຽງໄປມາ ລູກຂອງທ່ານຮູ້ສຶກມ່ວນກັບການຢອກບໍ່ ? ແມ່ນ ບໍ່ແມ່ນ
2. ລູກຂອງທ່ານ ມີຄວາມສົນໃຈໃນເດັກຄົນອື່ນ ບໍ່? ແມ່ນ ບໍ່ແມ່ນ
3. ລູກຂອງທ່ານ ມັກປີນຂຶ້ນສິ່ງຕ່າງໆ ເຊັ່ນ: ຂັ້ນໄດ ບໍ່? ແມ່ນ ບໍ່ແມ່ນ
4. ລູກຂອງທ່ານ ຮູ້ສຶກມັກເວລາຫຼິ້ນຈະເອ໋ ຫຼື ມັກຫຼິ້ນໝາກລີ້ ບໍ່? ແມ່ນ ບໍ່ແມ່ນ
5. ລູກຂອງທ່ານ ເຄີຍຫຼິ້ນບົດບາດສົມມຸດ ບໍ່ ເຊັ່ນ: ຫຼິ້ນເຄື່ອງກຳປ້າ ແລ້ວເຮັດນ້ຳຊາ ຫຼື ແຕ່ງກິນ ຫຼື ຫຼິ້ນສົມມຸດແບບອື່ນ ບໍ່? ແມ່ນ ບໍ່ແມ່ນ
6. ລູກຂອງທ່ານ ເຄີຍໃຊ້ນີ້ວຊີ້ໃສ່ສິ່ງໃດສິ່ງໜຶ່ງ ເພື່ອຂໍ ສິ່ງນັ້ນ ບໍ່? ແມ່ນ ບໍ່ແມ່ນ
7. ລູກຂອງທ່ານ ເຄີຍໃຊ້ນີ້ວຊີ້ໃສ່ຈຸດໃດໜຶ່ງ ຫຼື ສິ່ງໃດໜຶ່ງເພື່ອສະແດງໃຫ້ເຫັນວ່າລາວສົນໃຈໃນສິ່ງນັ້ນບໍ່? ແມ່ນ ບໍ່ແມ່ນ
8. ລູກຂອງທ່ານ ສາມາດຫຼິ້ນກັບເຄື່ອງຫຼິ້ນອັນນ້ອຍໆ ເຊັ່ນ: ລົດນ້ອຍໆ, ໂຕຕໍ່ນ້ອຍໆ ຢ່າງຖືກວິທີ ບໍ່ (ໂດຍບໍ່ໄດ້ເອົາມາອົມ, ບໍ່ເອົາມາຊຸກຖູ ຫຼືດຶກຖິ້ມ )? ແມ່ນ ບໍ່ແມ່ນ
9. ລູກຂອງທ່ານ ເຄີຍນຳສິ່ງຂອງມາອ້າງ ຫຼື ສະແດງໃຫ້ທ່ານ (ພໍ່ແມ່) ເຫັນ ບໍ່? ແມ່ນ ບໍ່ແມ່ນ

## ພາກ ຂ: ໃຫ້ທ່ານໝໍ ຫຼື ຜູ້ປະເມີນສັງເກດເດັກແລ້ວ ເປັນຄົນຕອບ

1. ໃນໄລຍະເວລາປະເມີນເດັກ ເດັກໄດ້ສົບຕາກັບທ່ານ ບໍ່? ແມ່ນ ບໍ່ແມ່ນ
2. ດຶງຄວາມສົນໃຈຂອງເດັກ ແລ້ວຊີ້ໄປຫາບ່ອນທີ່ມີວັດຖຸສິ່ງຂອງທີ່ໜ້າສົນໃຈ ທີ່ຢູ່ອີກຟາກໜຶ່ງ ຂອງຫ້ອງ ແລະ ເວົ້າວ່າ "ເບິ່ງໆຫັ້ນເດ!" ມີ (ໃຫ້ບອກຊື່ຂອງຫຼິ້ນທີ່ຊີ້ໃສ່ນັ້ນ)! ແລ້ວໃຫ້ສັງເກດເບິ່ງໜ້າ ຂອງເດັກ ວ່າເດັກເບິ່ງໄປຫາສິ່ງທີ່ທ່ານກຳລັງຊີ້ໃສ່ນັ້ນ ຫຼື ບໍ່? ແມ່ນ ບໍ່ແມ່ນ
3. ດຶງຄວາມສົນໃຈຂອງເດັກ ແລ້ວເອົາເຄື່ອງຫຼິ້ນໃຫ້ເດັກ ເຊັ່ນ: ຈອກ ແລະ ການ້ຳຊານ້ອຍ ແລະ ເວົ້າວ່າ "ເຮັດນ້ຳຊາໃຫ້ແດ່ຈອກໜຶ່ງໄດ້ບໍ່?" ແລ້ວສັງເກດເບິ່ງວ່າ ເດັກສາມາດເຮັດສົມມຸດຖອກນ້ຳຊາ, ດື່ມນ້ຳຊາ, ແລະ ອື່ນໆ ບໍ່? ແມ່ນ ບໍ່ແມ່ນ
4. ບອກເດັກວ່າ "ດອກໄຟຢູ່ໃສ?", ຫຼື "ຊອກດອກໄຟໃຫ້ແດ່" ແລ້ວສັງເກດວ່າເດັກສາມາດ ຊີ້ໄປໃສ່ດອກໄຟດ້ວຍມືຂອງລາວ ຫຼື ບໍ່? ແມ່ນ ບໍ່ແມ່ນ
5. ເດັກສາມາດ ກໍ່ຕຶກນ້ອຍດ້ວຍໂຕຕໍ່ໄມ້ໄດ້ ຫຼື ບໍ່? ແມ່ນ ບໍ່ແມ່ນ
   ຖ້າຕໍ່ໄດ້ ແມ່ນເດັກຕໍ່ໄດ້ຈັກອັນ? __________

ຂ 2: ໃນຂໍ້ 2 ຂອງພາກນີ້, ໃຫ້ໝາຍ "ແມ່ນ" ກໍ່ຕໍ່ເມື່ອເດັກສາມາດແນມເບິ່ງຫາວັດຖຸສິ່ງຂອງທີ່ທ່ານກຳລັງຊີ້ໄປຫາ ບໍ່ແມ່ນແນມໄປທີ່ມືຂອງທ່ານ

ຂ 3: ໃນຂໍ້ 3 ຂອງພາກນີ້, ໃຫ້ໝາຍ "ແມ່ນ" ຖ້າເດັກສາມາດຫຼິ້ນບົດບາດສົມມຸດແບບອື່ນໆໄດ້

ຂ 4: ໃນຂໍ້ 4 ຂອງພາກນີ້, ຖ້າເດັກບໍ່ເຂົ້າໃຈຄຳວ່າ "ດອກໄຟ" ໃຫ້ຖາມຫາວັດຖຸສິ່ງຂອງອື່ນທີ່ຢູ່ໄກອອກໄປ ເຊັ່ນ: "ຕຸກກະຕາຢູ່ໃສ?" ໃຫ້ໝາຍ "ແມ່ນ" ເມື່ອເດັກສາມາດຊີ້ໄປຫາສິ່ງຂອງນັ້ນພ້ອມທັງແນມໜ້າຂອງທ່ານໃນເວລາດຽວກັນ.

HANS Help Autism Now Society

www.helpautismnow.com

(ໃຫ້ເບິ່ງໜ້າຕໍ່ໄປ ສຳລັບຄຳແນະນຳໃນການໃຫ້ຄະແນນແບບສອບຖາມ)

ສະມາຄົມເພື່ອຄົນໂອທິສຕິກ
Association for Autism

www.facebook.com/laoautism.laa

ບັນດາຄຳຖາມສຳຄັນຕົ້ນຕໍຂອງ CHAT ພາກ ກ

ກ 5: ຫຼິ້ນບົດບາດສົມມຸດ
ກ 7: ການຊີ້ນິ້ວສ້າງຄວາມສົນໃຈ KK(ຊີ້ໃຫ້ເບິ່ງ)

ພາກ ຂ

ຂ 2: ການເບິ່ງໄປນຳຈຸດທີ່ຊີ້ບອກ
ຂ 3: ການສົມມຸດເຮັດ ຫຼື ຫຼິ້ນອັນໃດອັນໜຶ່ງ
ຂ 4: ການຮູ້ວ່າຈະຊີ້ໄປຫາສິ່ງທີ່ບອກ

ບັນດາຄຳຖາມທີ່ບໍ່ສຳຄັນຕົ້ນຕໍຂອງ CHAT ພາກ ກ

ກ 1: ການຢອກຫຼິ້ນແບບແກ່ວງໄປມາ
ກ 2: ຄວາມສົນໃຈຕໍ່ສັງຄົມອ້ອມຂ້າງ ຫຼື ເດັກຄົນອື່ນ
ກ 3: ພັດທະນາການດ້ານການເຄື່ອນໄຫວ
ກ 4: ການຫຼິ້ນໃນສັງຄົມ ຫຼື ຫຼິ້ນກັບເດັກຄົນອື່ນ
ກ 6: ການຊີ້ເພື່ອຂໍ ຫຼື ຢາກໄດ້ສິ່ງໃດໜຶ່ງ
ກ 8: ການຫຼິ້ນກັບເຄື່ອງຫຼິ້ນຢ່າງຖືກຕ້ອງ
ກ 9: ການສະແດງ ຫຼື ອວດອ້າງ

ພາກ ຂ

ຂ 1: ການສື່ສານທາງສາຍຕາ
ຂ 3: ການກໍ່ຕຶກນ້ອຍດ້ວຍບ່ອກໄມ້

### ການປະເມີນຄວາມສ່ຽງ

| | |
|---|---|
| ມີຄວາມສ່ຽງສູງ ຕໍ່ການເປັນໂອທິສຕິກ | ຖ້າຕອບ "ບໍ່ແມ່ນ" ຂອງຄຳຖາມ ກ5, ກ7, ຂ2, ຂ3, ຂ4 |
| ມີຄວາມສ່ຽງປານກາງ ຕໍ່ການເປັນໂອທິສຕິກ | ຖ້າຕອບ "ບໍ່ແມ່ນ" ຂອງຄຳຖາມ ກ7, ຂ4 (ແຕ່ບໍ່ໄດ້ຢູ່ໃນກຸ່ມສ່ຽງສູງ) |
| ມີຄວາມສ່ຽງຕ່ຳ ຕໍ່ການເປັນໂອທິສຕິກ | ບໍ່ນອນຢູ່ໃນ ສອງ ກຸ່ມສ່ຽງຂ້າງເທິງ |

### ຄຳແນະນຳໃນການປະຕິບັດ

| | |
|---|---|
| ກຸ່ມທີ່ມີຄວາມສ່ຽງສູງ | ໃຫ້ນຳສົ່ງໄປຍັງຄລີນິກກ່ຽວກັບພັດທະນາການ ຫຼື ໝໍທີ່ຊ່ຽວຊານ ຫຼື ສະມາຄົມເພື່ອຄົນໂອທິສຕິກ |
| ກຸ່ມທີ່ມີຄວາມສ່ຽງປານກາງ | ມີຄວາມສົງໄສສູງ -- ໃຫ້ນຳສົ່ງໄປຍັງສະຖານທີ່ຄືກັບຄວາມສ່ຽງສູງ<br>ມີຄວາມສົງໄສຕ່ຳ -- ໃຫ້ທົດສອບຄືນ ໃນໜຶ່ງເດືອນ |
| ກຸ່ມມີຄວາມສ່ຽງຕ່ຳ | ຖ້າມີຄຳຕອບ "ບໍ່ແມ່ນ", ໃຫ້ທົດສອບຄືນ ໃນໜຶ່ງເດືອນ. |

HANS Help Autism Now Society
www.helpautismnow.com

# ອາການຕ່າງໆ ກ່ຽວກັບພຶດຕິກຳ ຂອງເດັກໂອທິສຕິກ

ສະມາຄົມເພື່ອຄົນໂອທິສຕິກ

Association for Autism

www.facebook.com/laoautism.laa



ດ້ານສັງຄົມ

ດ້ານການສື່ສານ

ດ້ານພຶດຕິກຳທີ່ແປກໆ ຫຼື ພຶດຕິກຳທີ່ເຮັດຊ້ຳໆ



ດ້ານການເຄື່ອນໄຫວ

ການຮັບຮູ້ຂອງປະສາດສຳພັດທີ່ໄວເກີນໄປ

ດ້ານປະສາດສຳພັດ

ການທຳຮ້າຍຕົນເອງ

ຄວາມປອດໄພ

HANS Help Autism Now Society

www.helpautismnow.com

ສະມາຄົມເພື່ອ
Association for Autism
ຄົນໂອທິສຕິກ

www.facebook.com/laoautism.laa


## ບັນຫາດ້ານສັງຄົມ

ອາດຈະບໍ່ສະແດງຄວາມສົນໃຈໃນການຫຼິ້ນກັບເດັກຄົນອື່ນ





ອາດຈະໃຊ້ຄວາມຮຸນແຮງກັບອ້າຍນ້ອງ

ອາດຈະນັ່ງຮ້ອງໄຫ້ຜູ້ດຽວ
ແທນທີ່ຈະຮ້ອງຫາແມ່





ອາດຈະບໍ່ສັງເກດຕອນພໍ່ແມ່
ອອກໄປ ຫຼື ກັບມາຈາກວຽກ


HANS Help Autism Now Society
www.helpautismnow.com

# ອາການຕ່າງໆ ກ່ຽວກັບພຶດຕິກຳ ຂອງເດັກໂອທິສຕິກ

ສະມາຄົມເພື່ອ
Association for Autism
ຄົນໂອທິສຕິກ

www.facebook.com/laoautism.laa

## ບັນຫາດ້ານສັງຄົມ

ອາດຈະບໍ່ສະແດງຄວາມສົນໃຈ
ໃນການຫຼິ້ນຈະເອ໋ ຫຼື ເກມອື່ນໆ
ທີ່ມີປະຕິກິລິຍາໂຕ້ຕອບກັນ






ອາດຈະຂັດຂືນບໍ່ໃຫ້ພໍ່ແມ່ອຸ້ມ,
ກອດ ຫຼື ຫອມແກ້ມ





ອາດຈະບໍ່ຍົກແຂນຂຶ້ນ ເພື່ອຢາກໃຫ້ອຸ້ມ
ອອກຈາກຕຽງ ເມື່ອມີໃຜຜູ້ໜຶ່ງຍື່ນມື
ຈະໄປອຸ້ມເອົາ

Help Autism Now Society
www.helpautismnow.com

ສະມາຄົມເພື່ອ
Association for Autism
ຄົນໂອທິສຕິກ

www.facebook.com/laoautism.laa

## ບັນຫາດ້ານການສື່ສານ

ເດັກໂອທິສຕິກ ສ່ວນໃຫຍ່ຈະບໍ່ຮັບຮູ້ສະພາບແວດລ້ອມອ້ອມຂ້າງຂອງຕົນເອງ ແລະ ອາດຈະມີບັນຫາໃນການສື່ສານດ້ານສາຍຕາ. ດັ່ງນັ້ນ, ຈຶ່ງເບິ່ງຄືວ່າ ພວກເຂົາບໍ່ມີ ຄວາມສົນໃຈໃນການສື່ສານປະເພດໃດເລີຍ.

ເມື່ອພວກເຂົາຕ້ອງການສິ່ງໃດໜຶ່ງ ພວກເຂົາຈະຈັບ “ມືຜູ້ອື່ນໄປຈັບ”. ເດັກຈະວາງມື ຂອງພໍ່ແມ່ ເທິງວັດຖຸທີ່ ຢາກໄດ້, ດັ່ງນັ້ນ ການໃຊ້ພໍ່ແມ່ ຫຼື ຜູ້ໃຫຍ່ດັ່ງກ່າວ ເປັນດັ່ງ “ເຄື່ອງມື” ເພື່ອເອົາສິ່ງທີ່ຕ້ອງການ. ເດັກປົກກະຕິທົ່ວໄປ ຈະສື່ສານໃນສິ່ງທີ່ຕົນເອງ ຕ້ອງການດ້ວຍສຽງ ຫຼື ທ່າທາງ ເຊັ່ນ: ການຊີ້ບອກ.



ບໍ່ຮັບຮູ້ຕໍ່ສະພາບແວດລ້ອມ



ຫຼີກລ້ຽງການສົບສາຍຕາ



ໃຊ້ມືຜູ້ອື່ນໄປຈັບສິ່ງທີ່ຕ້ອງການ

HANS Help Autism Now Society
www.helpautismnow.com

# ອາການຕ່າງໆ ກ່ຽວກັບພຶດຕິກຳ ຂອງເດັກໂອທິສຕິກ

ສະມາຄົມເພື່ອ
Association for Autism
ຄົນໂອທິສຕິກ

www.facebook.com/laoautism.laa

## ບັນຫາພຶດຕິກຳແປກໆ ຫຼື ພຶດຕິກຳທີ່ເຮັດຊ້ຳໆ



ສະບັດມືໄປມາຊ້ຳໆ



ຈ້ອງເບິ່ງພັດລົມເທິງເພດານ



ປິ່ນອ້ອມໂຕເອງ

ລຽງລົດຂອງຫຼິ້ນ (ຫຼື ເຄື່ອງອື່ນ)



HANS Help Autism Now Society
www.helpautismnow.com

# ອາການຕ່າງໆ ກ່ຽວກັບພຶດຕິກຳ ຂອງເດັກໂອທິສຕິກ

ສະມາຄົມເພື່ອ
Association for Autism
ຄົນໂອທິສຕິກ

www.facebook.com/laoautism.laa

## ບັນຫາພຶດຕິກຳແປກໆ ຫຼື ພຶດຕິກຳທີ່ເຮັດຊ້ຳໆ

ອາດຈະບໍ່ສະແດງຄວາມສົນໃຈໃນ
ເຄື່ອງຫຼິ້ນ ແຕ່ພັດມັກສິ່ງຂອງອື່ນທີ່
ອາດຈະບໍ່ແມ່ນເຄື່ອງຫຼິ້ນ





ມັກຈັບລະອອງຝຸ່ນໃນແສງແດດ





ອາດຈະບໍ່ຮູ້ຫຼິ້ນເຄື່ອງຫຼິ້ນຢ່າງຖືກວິທີ,
ແຕ່ໄປສົນໃຈສະເພາະສ່ວນໃດໜຶ່ງຂອງ
ເຄື່ອງຫຼິ້ນແທນ ເຊັ່ນ: ມັກໝູນຕີນລົດເຄື່ອງຫຼິ້ນ

Help
Autism
Now
Society
www.helpautismnow.com

# ອາການຕ່າງໆ ກ່ຽວກັບພຶດຕິກຳ ຂອງເດັກໂອທິສຕິກ

ສະມາຄົມເພື່ອ ຄົນໂອທິສຕິກ

Association for Autism

www.facebook.com/laoautism.laa

## ບັນຫາພຶດຕິກຳແປກໆ ຫຼື ພຶດຕິກຳທີ່ເຮັດຊ້ຳໆ



ນັ່ງໂຍກໂຕໄປມາ



ມັກເປີດ-ປິດດອກໄຟຕະຫຼອດເວລາ



ມັກກິນສິ່ງຂອງທີ່ກິນບໍ່ໄດ້ ເຊັ່ນ:
ເຄື່ອງນຸ່ງ, ເສື່ອນອນ ຫຼື ຜ້າກັ້ງ



ມັກຫຼິ້ນນິ້ວມືຢູ່ໃກ້
ກັບຕາຂອງໂຕເອງ

HANS Help Autism Now Society

www.helpautismnow.com

# ອາການຕ່າງໆ ກ່ຽວກັບພຶດຕິກຳ ຂອງເດັກໂອທິສຕິກ

www.facebook.com/laoautism.laa

## ບັນຫາພຶດຕິກຳແປກໆ ຫຼື ພຶດຕິກຳທີ່ເຮັດຊ້ຳໆ

ຊອກໄປຢູ່ບ່ອນທີ່ຄັບແຄບ
ເພື່ອເຮັດໃຫ້ໂຕເອງ
ຖືກໜີບເຕັງ



ຫຼິ້ນກັບອາຈົມ (ຂີ້) ໂຕເອງ



ຊອກຫາຫົນທາງເຮັດໃຫ້ຮ່າງກາຍ
ໄດ້ຮັບການກະທົບຢ່າງແຮງ



www.helpautismnow.com

# ອາການຕ່າງໆ ກ່ຽວກັບພຶດຕິກຳ ຂອງເດັກໂອທິສຕິກ

ສະມາຄົມເພື່ອ ຄົນໂອທິສຕິກ

Association for Autism

www.facebook.com/laoautism.laa

## ບັນຫາການເຄື່ອນໄຫວ

ເດັກໂອທິສຕິກ ສາມາດສະແດງອາການຄວາມຜິດປົກກະຕິດ້ານການເຄື່ອນໄຫວ ໃຫ້ເຫັນເຊັ່ນ: ເດັກບາງຄົນອາດຈະ ມີທັກສະທີ່ດີໃນການເຄື່ອນໄຫວຢູ່ພື້ນທີ່ສະເພາະ ໃດໜຶ່ງ ແຕ່ບໍ່ສາມາດເຄື່ອນໄຫວໄດ້ໃນພື້ນທີ່ອື່ນໆ.



ມີຄວາມບົກຜ່ອງທາງດ້ານກ້າມເນື້ອມັດນ້ອຍ ເຊັ່ນຢິບຈັບສິ່ງຂອງນ້ອຍບໍ່ໄດ້ດີ



ການສຳພັນລະຫວ່າງອະໄວຍະວະຕ່າງໆ ຂອງຮ່າງກາຍມີຄວາມບົກຜ່ອງ, ຄວາມສາມາດໃນການໃຊ້ສ່ວນຕ່າງໆ ຂອງຮ່າງກາຍ ບໍ່ດີເທົ່າທີ່ຄວນ



ຍ່າງແປ່ງຕີນ



ຂາດຄວາມສາມາດໃນການກະໄລຍະຫ່າງ

Help Autism Now Society

www.helpautismnow.com

# ອາການຕ່າງໆ ກ່ຽວກັບພຶດຕິກຳ ຂອງເດັກໂອທິສຕິກ

ສະມາຄົມເພື່ອ
Association for Autism
ຄົນໂອທິສຕິກ

www.facebook.com/laoautism.laa

## ບັນຫາການເຄື່ອນໄຫວ

ເຖິງວ່າເດັກບາງຄົນອາດມີທັກສະການເຄື່ອນໄຫວປົກກະຕິທົ່ວໄປ ແຕ່ກໍອາດຈະພົບ ຂໍ້ຫຍຸ້ງຍາກໃນການເຮັດບາງກິດຈະກຳເຊັ່ນ: ການຂີ່ລົດຖີບເດັກນ້ອຍ, ຂີ່ລົດເຄື່ອງຫຼິ້ນ ແລະ ອື່ນໆ.



ມີການຊົງໂຕທີ່ດີເກີນປົກກະຕິ

ຫຼື



ເຊື່ອຊ້າ, ບໍ່ຄ່ອງແຄ້ວ



ນ້ຳລາຍໄຫຼ



ບໍ່ສາມາດຂີ່
ລົດຖີບນ້ອຍ
ສາມຕີນ ຫຼື
ລົດເຄື່ອງຫຼິ້ນ

Help Autism Now Society
www.helpautismnow.com

# ອາການຕ່າງໆ ກ່ຽວກັບພຶດຕິກຳ ຂອງເດັກໂອທິສຕິກ

ສະມາຄົມເພື່ອ
Association for Autism
ຄົນໂອທິສຕິກ

www.facebook.com/laoautism.laa

## ການຮັບຮູ້ຂອງປະສາດສາດສຳພັດທີ່ຫຼາຍເກີນໄປ



Help
Autism
Now
Society

www.helpautismnow.com

ເດັກໂອທິສຕິກມີຄວາມຫຍຸ້ງຍາກໃນການທົນທານຕໍ່ກັບສິ່ງລົບກວນຕໍ່ປະສາດສຳພັດຂອງເຂົາເຈົ້າເຊັ່ນ: ສຽງເພັງ, ສຽງວົນແຊວ, ຜ້າແພ ຫຼື ເສື້ອຜ້າ ແລະ ປະສົບການໃໝ່ໆ ຫຼື ສະພາບແວດລ້ອມໃໝ່ໆ. ດັ່ງນັ້ນ, ຍິ່ງປະສາດສຳພັດຖືກລົບກວນຫຼາຍຂຶ້ນເທົ່າໃດ, ຍິ່ງມີແນວໂນ້ມເຮັດໃຫ້ເຂົາເຈົ້າ ງຸດງິດ ຊຶ່ງອາດຈະພາໃຫ້ເກີດພຶດຕິກຳຕໍ່ຕ້ານ ແລະ ອາລະວາດ.

# ອາການຕ່າງໆ ກ່ຽວກັບພຶດຕິກຳ ຂອງເດັກໂອທິສຕິກ

ສະມາຄົມເພື່ອ
Association for Autism
ຄົນໂອທິສຕິກ

www.facebook.com/laoautism.laa

## ບັນຫາດ້ານປະສາດສາດສຳພັດ

ມີຄວາມຫຍຸ້ງຍາກໃນເວລາໄປຕັດຜົມ





ບໍ່ສາມາດທົນຢູ່ກັບການຮັດເຂັມຂັດນິລະໄພ

ອາດຈະບໍ່ມັກສິ່ງໃໝ່ໆ ເຊັ່ນ:
ທຽນວັນເກີດ ຫຼື ປຸມເປົ້າວັນເກີດ





ອາດຈະບໍ່ມັກໃຫ້ອາບນ້ຳ

HANS Help Autism Now Society
www.helpautismnow.com

# ອາການຕ່າງໆ ກ່ຽວກັບພຶດຕິກຳ ຂອງເດັກໂອທິສຕິກ

ສະມາຄົມເພື່ອ ຄົນໂອທິສຕິກ
Association for Autism

www.facebook.com/laoautism.laa

## ບັນຫາດ້ານປະສາດສາດສຳພັດ

ປວດຮາກກັບກິ່ນຕ່າງໆ
ຢູ່ໃນເຮືອນ





ອາດຈະມີບັນຫາ
ກັບການຟັງເພັງ

ປິ່ນວັດຖຸຕ່າງໆ
ໃກ້ກັບໜ້າໂຕເອງ





ອາດຈະເປັນຄືຄົນຫູບໍ່ໄດ້ຍິນສຽງຫຍັງ,
ບໍ່ຕົກໃຈຕໍ່ສຽງດັງໆ ແຕ່ບາງເວລາ
ການໄດ້ຍິນຄືບໍ່ຜິດປົກກະຕິຫຍັງ

Help Autism Now Society
www.helpautismnow.com

# ອາການຕ່າງໆ ກ່ຽວກັບພຶດຕິກຳ ຂອງເດັກໂອທິສຕິກ

ສະມາຄົມເພື່ອ
Association for Autism
ຄົນໂອທິສຕິກ
www.facebook.com/laoautism.laa

## ບັນຫາດ້ານປະສາດສາດສຳພັດ



ອາດຈະມີຄວາມຫຍຸ້ງຍາກທີ່ຈະໃຫ້ນຸ່ງເສື້ອກັນໜາວໃນຍາມໜາວ

ຂັດຂືນເວລາ
ຈະປ່ຽນເຄື່ອງນຸ່ງ





ອາດຈະຈີກເສື້ອຜ້າ, ກາເທິງເສື້ອ ແລະ
ຮອຍຫຍິບເທິງເຄື່ອງນຸ່ງຂອງໂຕເອງ

ຍາມຮ້ອນ ພັດຂັດຢາກ
ຈະໃສ່ເຄື່ອງກັນໜາວ



Help
Autism
Now
Society
www.helpautismnow.com

# ອາການຕ່າງໆ ກ່ຽວກັບພຶດຕິກຳ ຂອງເດັກໂອທິສຕິກ

ສະມາຄົມເພື່ອ ຄົນໂອທິສຕິກ
Association for Autism

www.facebook.com/laoautism.laa

## ພຶດຕິກຳທຳຮ້າຍຕົນເອງ



ເອົາຫົວທຸບພື້ນແຮງໆ



ກັດຕົນເອງໂດຍບໍ່ສະແດງ
ອາການເຈັບປວດ



ດຶງ ແລະ ຂູດຜິວໜັງ



ເອົາມືດຶງຜົມອອກມາເປັນກຳ

HANS
Help
Autism
Now
Society
www.helpautismnow.com

ສະມາຄົມເພື່ອ
Association for Autism
ຄົນໂອທິສຕິກ

www.facebook.com/laoautism.laa

## ບັນຫາດ້ານຄວາມປອດໄພ



ບໍ່ມີຄວາມຮູ້ສຶກຢ້ານຄວາມອັນຕະລາຍ





HANS Help Autism Now Society
www.helpautismnow.com

ສະມາຄົມເພື່ອ
Association for Autism
ຄົນໂອທິສຕິກ

www.facebook.com/laoautism.laa

## ບັນຫາດ້ານຄວາມປອດໄພ



ບໍ່ຮູ້ວ່າ ຕົນເອງອາດຈະໄດ້ຮັບບາດເຈັບ
ໃນສະຖານະການຕ່າງໆ






HANS
Help
Autism
Now
Society
www.helpautismnow.com

ສະມາຄົມເພື່ອ
ຄົນໂອທິສຕິກ
Association for Autism

www.facebook.com/laoautism.laa

## ບັນຫາດ້ານຄວາມປອດໄພ





ບໍ່ຢ້ານຄວາມສູງ



HANS Help Autism Now Society
www.helpautismnow.com

# ຄວາມຜິດປົກກະຕິກ່ຽວກັບລະບົບທາງເດີນອາຫານ

ສະມາຄົມເພື່ອ ຄົນໂອທິສຕິກ

Association for Autism

www.facebook.com/laoautism.laa

ທ່ານ ດຣ. ທິມ ບິວ (Tim Buie) ຜູ້ຊ່ຽວຊານດ້ານລະບົບທາງເດີນອາຫານ ຂອງມະຫາວິທະຍາໄລຮາເວີດ (Harvard University) ແລະ ໂຮງໝໍແມສເຈັນເນີໂລ (Mass  General Hospital) ຢູ່ເມືອງບອສຕັນ ປະເທດ ອາເມລິກາ ໄດ້ສ່ອງກວດພາຍໃນທາງເດີນອາຫານຂອງເດັກໂອທິສຕິກຫຼາຍກວ່າ 1.000 ຄົນ.  ໃນຈຳນວນເດັກ 400 ຄົນທຳອິດ ໄດ້ພົບວ່າ ບັນຫາລະບົບທາງເດີນອາຫານ ແມ່ນມີຫຼາຍຢູ່ໃນເດັກໂອທິສຕິກ ຫຼາຍກວ່າເດັກປົກກະຕິ.

- 20%   ຫຼອດອາຫານອັກເສບ
- 12%   ລຳໄສ້ໃຫຍ່ອັກເສບ
- 10%   ລຳໄສ້ນ້ອຍອັກເສບ
- 12%   ກະເພາະອາຫານອັກເສບ
- 55%   ພາວະຂາດທາດແລກເທສ   ຫຼື ສານທີ່ໃຊ້ຍ່ອຍທາດແລກໂຕສ ໃນອາຫານ

ໃຫ້ຜູ້ປົກຄອງພາເດັກໄປຫາຊ່ຽວຊານດ້ານລະບົບອາຫານຫາກພົບອາການຂ້າງລຸ່ມນີ້



ຖອກທ້ອງ



ພົບເສດອາຫານບໍ່ຍ່ອຍໃນອາຈົມ



ເລືອກກິນແຕ່ອາຫານປະເພດໃດໜຶ່ງຢ່າງດຽວ ແລະ/ຫຼື ມີຄວາມຮູ້ສຶກໄວຕໍ່ອາຫານ



ທ້ອງຜູກ

HANS Help Autism Now Society

www.helpautismnow.com

# ຄວາມຜິດປົກກະຕິໃນການນອນ / ການຕອບສະໜອງຕໍ່ຄວາມເຈັບປວດ / ການຊັກ

ສະມາຄົມເພື່ອ
Association for Autism
ຄົນໂອທິສຕິກ

www.facebook.com/laoautism.laa



## ຄວາມຜິດປົກກະຕິໃນການນອນ

ເດັກອາດຈະຫຼິ້ນໄດ້ໝົດມື້ ໂດຍບໍ່ມີອາການຢາກນອນ. ອາດຈະເບິ່ງຄືວ່າ ບໍ່ຮູ້ສັງເກດ ຄວາມແຕກຕ່າງລະຫວ່າງ ກາງເວັນ ແລະ ກາງຄືນ. ອາດຈະມີບັນຫາໃນການເຂົ້ານອນ ແລະ ບໍ່ຮູ້ສຶກເຫງົານອນ. ອາດຈະນອນພຽງຊ່ວງເວລາສັ້ນໆ ເຊັ່ນ: ໜຶ່ງ ຫຼື ສອງຊົ່ວໂມງສູງສຸດ.

ຊຶ່ງອາດຈະສົ່ງຜົນໃຫ້ຜູ້ປົກຄອງຕົກຢູ່ໃນສະພາບຂອງການອົດນອນ.





## ການຊັກ

ອາດຈະມີອາການຊັກແຊກຊ້ອນຊຶ່ງ ຈະເພີ່ມຂື້ນໄປຕາມອາຍຸ ໂດຍບໍ່ຮູ້ສາເຫດ

## ການຕອບສະໜອງຕໍ່ຄວາມເຈັບປວດທີ່ແຕກຕ່າງກັນ

ບໍ່ມີ ຫຼື ມີໜ້ອຍ ໃນການຕອບສະໜອງຕໍ່ຄວາມເຈັບປວດ
ຫຼື
ການຕອບສະໜອງຕໍ່ຄວາມເຈັບປວດໃນລະດັບສູງ

HANS Help Autism Now Society
www.helpautismnow.com

# ຜົນກະທົບຂອງໂອທິສຕິກຕໍ່ຄອບຄົວ

ສະມາຄົມເພື່ອ
Association for Autism
ຄົນໂອທິສຕິກ

www.facebook.com/laoautism.laa




ຖ້າເດັກໂອທິສຕິກບໍ່ໄດ້ຮັບການຊ່ວຍເຫຼືອແຕ່ຫົວທີ
ອາດຈະພາໃຫ້ມີຄວາມຫຍຸ້ງຍາກໃນການເຮັດກິດຈະກຳທີ່ເຮັດເປັນປະຈຳ

ອາດພາໃຫ້ມີຄວາມເຄັ່ງຄຽດໃນຊີວິດຜົວເມຍ ແລະ ຄວາມເຄັ່ງຄຽດພາຍໃນກຸ່ມອ້າຍເອື້ອຍນ້ອງ ຄວນໄປຫາທີ່ປຶກສາດ້ານຄອບຄົວ/ອ້າຍເອື້ອຍນ້ອງ ແລະ ກຸ່ມຊ່ວຍເຫຼືອເຊິ່ງກັນ ແລະ ກັນຂອງທ້ອງຖິ່ນ ອາດຈະຊ່ວຍໄດ້.

Help Autism Now Society
www.helpautismnow.com

# ບົດບາດຂອງການຝຶກແອບແຕ່ຫົວທີ

ສະມາຄົມເພື່ອ
Association for Autism
ຄົນໂອທິສຕິກ

www.facebook.com/laoautism.laa



ມີຫຼາຍບົດຄົ້ນຄວ້າ ໄດ້ສະແດງໃຫ້ເຫັນວ່າ ການຝຶກແອບຢ່າງຈິງຈັງແຕ່ຫົວທີ ຈະນໍາໄປສູ່ຜົນໄດ້ຮັບທີ່ດີຂຶ້ນ ສໍາລັບເດັກ ແລະ ຄອບຄົວ. ກົນລະຍຸດເບື້ອງຕົ້ນ ອາດຈະເລີ່ມຕົ້ນສອນເດັກໃຫ້ຮູ້ຈັກສັງເກດວ່າມີຫຍັງດໍາເນີນໄປແດ່ໃນສະພາບແວດລ້ອມອ້ອມຂ້າງເຂົາເຈົ້າ, ສອນໃຫ້ເຂົາເຈົ້າມີຄວາມເອົາໃຈໃສ່, ສອນເຂົາເຈົ້າໃນການຮຽນແບບພຶດຕິກໍາ ແລະ ຫຼັງຈາກນັ້ນແມ່ນສອນເຂົາເຈົ້າກ່ຽວກັບທັກສະການສື່ສານ ແລະ ອື່ນໆ.



ຖ້າຫາກສັງເກດເຫັນສັນຍານເຕືອນທາງພັດທະນາການລ່າຊ້າໃຫ້ຄອບຄົວ ນໍາລູກໄປຝຶກແອບແຕ່ຫົວທີ (EI). ການຝຶກແອບແຕ່ຫົວທີ(EI) ແມ່ນອີງໃສ່ຄວາມຕ້ອງການຂອງເດັກແຕ່ລະຄົນຊຶ່ງ ອາດລວມມີ ການຝຶກເວົ້າ, ການຝຶກດ້ານກິດຈະກໍາບໍາບັດ ແລະ/ຫຼື ການຝຶກທາງກາຍຍະພາບ.

HANS
Help
Autism
Now
Society
www.helpautismnow.com

# ສັງລວມບັນດາຊ່ອງທາງທີ່ສາມາດຊ່ວຍເຫຼືອເດັກໂອທິສຕິກ

ສະມາຄົມເພື່ອ
Association for Autism
ຄົນໂອທິສຕິກ

www.facebook.com/laoautism.laa

1. ຜູ່ຊ່ຽວຊານດ້ານພັດທະນາການ

2. ການປະເມີນ ຂອງການຝຶກແອບແຕ່ຫົວທີ

3. ການປະເມີນກ່ຽວກັບການໄດ້ຍິນສຽງ

4. ການຝຶກເວົ້າ

5. ການຝຶກດ້ານກາຍຍະພາບ

6. ການຝຶກດ້ານກິດຈະກໍາບໍາບັດ

7. ຜູ່ຊ່ຽວຊານດ້ານລະບົບທາງເດີນອາຫານຂອງເດັກ (ຖ້າເດັກຖອກທ້ອງຮຸນແຮງ / ທ້ອງຜູກ ຫຼື ຖ່າຍໜັກບໍ່ເປັນປົກກະຕິ / ອາຈົມມີເລືອດ / ອາຫານບໍ່ຍ່ອຍ / ຮາກຫຼາຍຜິດປົກກະຕິ)

8. ຜູ່ຊ່ຽວຊານດ້ານເສັ້ນປະສາດ (ຖ້າອາການຊັກ ປາກົດຂຶ້ນ)

9. ຜູ່ຊ່ຽວຊານດ້ານໂລກປະສາດເດັກ / ນັກຈິດຕະວິທະຍາ

10. ນັກສັງຄົມສົງເຄາະ / ທີ່ປຶກສາບັນຫາຄອບຄົວ

11. ກຸ່ມສະໜັບສະໜູນຂອງພໍ່ແມ່ຜູ້ປົກຄອງຢູ່ທ້ອງຖິ່ນ

HANS Help Autism Now Society
www.helpautismnow.com

# ວິທີຊ່ວຍເດັກໂອທິສຕິກບໍ່ໃຫ້ກົດດັນ/ຢ້ານເວລາໄປຫາໝໍ

ສະມາຄົມເພື່ອ
Association for Autism
ຄົນໂອທິສຕິກ

www.facebook.com/laoautism.laa

ແພດໝໍແມ່ນຜູ່ທີ່ໄດ້ຮັບການຝຶກອົບຮົມເພື່ອໃຫ້ຊອກຫາສາເຫດຂອງອາການ ເຈັບປ່ອຍຕ່າງໆ. ເດັກໂອທິສຕິກນັ້ນສ່ວນໃຫຍ່ຈະເບິ່ງຄືບໍ່ເຈັບປ່ອຍຫຍັງ; ພວກເຂົາເບິ່ງຄືປົກກະຕິທຸກຢ່າງ ແລະເບິ່ງຄືມີການພັດທະນາການຕາມໄວ.



ແຕ່ບາງຄັ້ງພວກເຂົາອາດຈະເບິ່ງຄືວ່າເປັນເດັກທີ່ຖືກພໍ່ແມ່ຕາມໃຈຈົນເກີນໄປພວກເຂົາມີຄວາມຫຍຸ້ງຍາກຕໍ່ການປ່ຽນແປງຕ່າງໆ: ສະຖານະການໃໝ່, ປະສົບການໃໝ່ ແລະຄົນຜູ່ໃໝ່.




HANS Help Autism Now Society
www.helpautismnow.com

# ວິທີຊ່ວຍເດັກໂອທິສຕິກບໍ່ໃຫ້ກົດດັນ/ຢ້ານເວລາໄປຫາໝໍ

ສະມາຄົມເພື່ອ
Association for Autism
ຄົນໂອທິສຕິກ

www.facebook.com/laoautism.laa

## ຕິດຕໍ່ທາງໂທລະສັບກັບຜູ້ປົກຄອງກ່ອນລ່ວງໜ້າ

ພິນຄິມີດັ່ງນີ້:



1. ໄດ້ປະຫວັດທີ່ຈະແຈ້ງຈາກຜູ້ປົກຄອງ ໂດຍປາສະຈາກການລົບກວນຂອງ ເດັກຢູ່ທີ່ນັ້ນ.

2. ຖາມຜູ້ປົກຄອງເຖິງຄຳແນະນຳວ່າ ຈະເຮັດແນວໃດໃຫ້ການໄປຫາໝໍ ງ່າຍຂຶ້ນ.

3. ບອກຜູ່ປົກຄອງໃຫ້ນຳສິ່ງຂອງ (ສິ່ງຂອງທີ່ໃຊ້ຕໍ່ລອງ) ເພື່ອໄປຍົວະ ຫຼື ດຶງດູດ ໃຫ້ເດັກເຂົ້າຮ່ວມ ເຮັດບົດທົດສອບ.

4. ຖ້າທ່ານ ຄາດຄະເນວ່າຈະຕ້ອງໄດ້ເຈາະເລືອດເດັກ, ຄວນສັ່ງຢາມຶນແບບທາໃຫ້ ຜູ້ປົກຄອງກ່ອນ ເພື່ອທີ່ ຜູ້ປົກຄອງຈະໄດ້ສາມາດທາໃຫ້ເດັກກ່ອນລ່ວງໜ້າການໄປຮອດ.

5. ໃຫ້ການແນະນຳຜູ້ປົກຄອງ ກຽມຕົວເດັກໂດຍການອ່ານບົດເລື່ອງ (Social Story) ກ່ຽວກັບ “ການໄປຫາໝໍ” ແລະ/ຫຼື “ການໄປກວດເລືອດ” ທີ່ເຜີຍແຜ່ໂດຍ ອົງການ (HANS) ເວັບໄຊ: helpautismnow.com

## ຮັບຟັງຜູ່ປົກຄອງເດັກ

ຜູ່ປົກຄອງ ຖືເປັນຜູ່ຊ່ຽວຊານທີ່ “ເຂົ້າໃຈ” ລູກຂອງຕົນກ່ວາຄົນອື່ນໆ.



ອາການພາຍນອກໃດໆ ທີ່ເບິ່ງແລ້ວປິ່ນປົວ ໄດ້ຄືເດັກປົກກະຕິທົ່ວໄປ ກໍໃຫ້ປິ່ນປົວໄປ ຕາມອາການນັ້ນ (ໂດຍບໍ່ຄວນປ່ອຍໃຫ້ບັນຫາ ໂອທິສຕິກ ສົ່ງຜົນຕໍ່ການຕັດສິນໃຈ ໃນການປິ່ນປົວ).

Help
Autism
Now
Society
www.helpautismnow.com

# ວິທີຊ່ວຍເດັກໂອທິສຕິກບໍ່ໃຫ້ກົດດັນ/ຢ້ານເວລາໄປຫາໝໍ

ສະມາຄົມເພື່ອ
Association for Autism
ຄົນໂອທິສຕິກ

www.facebook.com/laoautism.laa

## ການກະກຽມຫ້ອງກວດ

ນາງພະຍາບານ ຫຼື ຜູ້ຊ່ວຍແພດ ສາມາດກວດເບິ່ງສະຖານທີ່ ຫຼື ຫ້ອງກ່ອນລ່ວງໜ້າຮ່ວມກັບຜູ້ປົກຄອງເດັກ. ສິ່ງເຫຼົ່ານີ້ ອາດຈະລວມມີ:



ຫ້ອງທີ່ງຽບສະຫງົບ

ຫ້ອງທີ່ບໍ່ມີປ່ອງຢ້ຽມ

ບໍ່ມີດອກໄຟສະຫວ່າງຫຼາຍ

ບໍ່ມີສຽງເພັງ

ຖ້າຈຳເປັນ ກໍໃຫ້ຍົກຍ້າຍສິ່ງຂອງທັງໝົດທີ່ອາດຈະຖືກໃຊ້ເປັນອາວຸດ ຫຼື ສິ່ງອັນຕະລາຍ.

## ຖ້າເປັນໄປໄດ້ ເຮັດໃຫ້ເວລາຂອງການລໍຖ້າໜ້ອຍທີ່ສຸດ

ສິ່ງທີ່ຄວນປະຕິບັດ:



ໃຫ້ຈັດລຳດັບການນັດພົບຂອງເດັກເປັນຄິວທຳອິດໃນມື້ນັ້ນ (10 ນາທີ ລ່ວງໜ້າ ຈະປ້ອງກັນບໍ່ໃຫ້ ເດັກພົບເຫັນ ຄົນອື່ນໆ ເວລາເຂົາເຈົ້າໄປເຖິງ).

ຜົນດີທີ່ໄດ້ຈາກການປະຕິບັດດັ່ງກ່າວ:

ຫຼຸດຜ່ອນຄວາມສ່ຽງ:

1. ເດັກຈະເກີດ “ຄວາມໂມໂຫໃຈຮ້າຍ”
2. ການລົບກວນຜູ້ອື່ນໃນຫ້ອງລໍຖ້າ
3. ຄວາມອັບອາຍຂອງຜູ້ປົກຄອງ
4. ການທຳລາຍທີ່ອາດຈະເກີດຂຶ້ນໃນຫ້ອງລໍຖ້າ

ຖ້າເປັນໄປໄດ້ ແມ່ນໃຫ້ລົງທະບຽນເດັກໄວ້ລ່ວງໜ້າຜ່ານທາງໂທລະສັບ

HANS Help Autism Now Society
www.helpautismnow.com

# ວິທີຊ່ວຍເດັກໂອທິສຕິກບໍ່ໃຫ້ກົດດັນ/ຢ້ານເວລາໄປຫາໝໍ

ສະມາຄົມເພື່ອ
Association for Autism
ຄົນໂອທິສຕິກ

www.facebook.com/laoautism.laa

## ບາງສິ່ງອາດບໍ່ເປັນດັ່ງທີ່ທ່ານເຫັນ



ເດັກໂອທິສຕິກໂດຍສ່ວນໃຫຍ່ອາດເບິ່ງ ຄືວ່າເປັນເດັກທີ່ຖືກປ່ອຍປະລະເລີຍ ຫຼື ຖືກທຳຮ້າຍຮ່າງກາຍ. ດັ່ງນັ້ນ, ພວກເຮົາ ຕ້ອງໄດ້ຄຳນຶງເຖິງບັນຫາທີ່ພົວພັນເຖິງ ພຶດຕິກຳຂອງເຂົາເຈົ້າດັ່ງນີ້:

ພຶດຕິກຳທຳຮ້າຍຕົນເອງຢ່າງຮຸນແຮງເຊັ່ນ:

ກັດຕົນເອງ, ເອົາຫົວທຸບຝາ ຫຼື ພື້ນ, ຂູດຕົນເອງ ແລະ ອື່ນໆ.

ບໍ່ຮູ້ສຶກເຈັບ ຫຼື ອາດຈະຮູ້ເຈັບໜ້ອຍ.

ບໍ່ຮູ້ຈັກຢ້ານອັນຕະລາຍ

ມີບັນຫາດ້ານປະສາດສຳພັດທີ່ໄວເກີນໄປ ເຮັດໃຫ້ມີຄວາມຫຍຸ້ງຍາກໃນການປ່ຽນເຄື່ອງນຸ່ງ ແລະ ອາບນ້ຳ

## ລະມັດລະວັງຕໍ່ສິ່ງທີ່ບໍ່ຄາດຄິດ

### ເອົາໃຈໃສ່ຕໍ່ຄວາມປອດໄພຂອງທ່ານ

ເດັກໂອທິສຕິກບາງຄົນອາດຈະບໍ່ເຂົ້າໃຈວ່າທ່ານກຳລັງຈະຊ່ວຍເຂົາເຈົ້າ, ກົງກັນຂ້າມ ເຂົາອາດຄິດວ່າທ່ານກຳລັງຄຸກຄາມເຂົາເຈົ້າ. ບາງຍາມເຂົາອາດຈະສະຫງົບນິ້ງ ແຕ່ຕໍ່ມາອາດຈະເກີດອາລົມຮ້າຍ ແລະ ອາດຈະ:



ເອົາຫົວຕຳ

ກັດ

ເຕະ

ຖົ່ມນ້ຳລາຍ

ຕີ

ດຶງຜົມ

ກອດໂຕເອງ ແລະ ອື່ນໆ

Help Autism Now Society
www.helpautismnow.com

# ວິທີຊ່ວຍເດັກໂອທິສຕິກບໍ່ໃຫ້ກົດດັນ/ຢ້ານເວລາໄປຫາໝໍ

ສະມາຄົມເພື່ອ
Association for Autism
ຄົນໂອທິສຕິກ

www.facebook.com/laoautism.laa

## ມີຂໍ້ຈຳກັດໃນການເຂົ້າໃຈພາສາ ແລະ ການເວົ້າ

ເດັກໂອທິສຕິກບາງຄົນສາມາດ ເລົ່າເລື່ອງກະຕູນທີ່ໂຕເອງເບິ່ງມາ ໄດ້ຢ່າງລ່ຽນໄຫຼ ແຕ່ບໍ່ສາມາດ ບອກຊື່ຂອງຕົນເອງ ແລະ ບໍ່ສາມາດບອກໄດ້ວ່າຕົນເອງ ເຈັບຫຍັງ.
ພວກເຂົາອາດຈະພົບ ຄວາມຫຍຸ້ງຍາກໃນການເຂົ້າໃຈ ສິ່ງທີ່ເຂົາໄດ້ຍິນ.



## ເອົາໃຈໃສ່ຕໍ່ບັນຫາທີ່ອາດເກີດຂຶ້ນພາຍໃນຄອບຄົວ

ຖ້າມີຄວາມຈຳເປັນອາດຈະ ຊອກຫາ:

ການຝຶກອົບຮົມໃຫ້ບັນດາ ອ້າຍເອື້ອຍນ້ອງ

ກຸ່ມຊ່ວຍເຫຼືອຜູ້ປົກຄອງ

ຫຼື ການບໍລິການທີ່ຊ່ວຍ ໃຫ້ຄອບຄົວໄດ້ໄປພັກຜ່ອນ



HANS Help Autism Now Society
www.helpautismnow.com

# ອົງການຈັດຕັ້ງ ທີ່ສາມາດໃຫ້ຄຳປຶກສາທ໌ຜູ້ປົກຄອງໄດ້

## ນະຄອນຫຼວງວຽງຈັນ

### ສະມາຄົມເພື່ອຄົນໂອທິສຕິກ (AfA)
ໜ່ວຍງານກັ່ນກອງ ແລະ ໃຫ້ຄຳປຶກສາ

*http://blog.laoautism.org*
ບ້ານໂພນປ່າເປົ້າ, ເມືອງສີສັດຕະນາກ
ໂທ: 021 330409, 030 5329045
ອີເມວ: consultation@laoautism.org

- ໃຫ້ຂໍ້ມູນຂ່າວສານແກ່ຜູ້ປົກຄອງກ່ຽວກັບປະເພດຂອງຄວາມພິການທາງດ້ານພັດທະນາການ, ຄວາມພິການທາງດ້ານສະໝອງ ແລະ ບັນດາອາການຕ່າງໆທີ່ກ່ຽວຂ້ອງ.
- ກັ່ນກອງພຶດຕິກຳຂອງເດັກໂດຍການສັງເກດ ແລະ ຖ້າມີອາການສົງໃສວ່າມີອາການ ASD ແມ່ນຈະນຳໃຊ້ແບບຄັດກອງໂອທິສຊຶມ (ນຳໃຊ້ແບບກັ່ນຕອງ M-CHAT )
- ປຶກສາຫາລືກັບພໍ່ແມ່ຜູ້ປົກຄອງ ເພື່ອນຳສົ່ງເດັກໄປບົ່ງມະຕິກັບຜູ້ຊ່ຽວຊານ
- ສະໜອງການຝຶກອົມຮົມຂັ້ນພື້ນຖານໃນການຝຶກເດັກໂດຍນຳໃຊ້ຫຼັກສູດການສອນທີ່ ເໝາະສົມ
- ໃຫ້ຄຳປຶກສາແກ່ພໍ່ແມ່ຜູ້ປົກຄອງກ່ຽວກັບການນຳໃຊ້ເຕັກນິກ ໃນການສອນລູກ, ການວາງແຜນຮຽນຂອງລູກຕ້ອງໄດ້ອີງໃສ່ແຕ່ລະກໍລະນີຂອງເດັກ.
- ຈັດຝຶກອົບຮົມໃຫ້ຜູ້ປົກຄອງກ່ຽວກັບການຝຶກແອບເດັກ
- ຝຶກອົບຮົມໃຫ້ສະຖານການສຶກສາທັງພາກລັດ ແລະ ເອກະຊົນໃນການໃຫ້ການຊ່ວຍເຫຼືອເດັກໂອທິສຕິກໃນໂຮງຮຽນ

### ສູນ ໄຊ-ເມດ
ທ່ານໝໍ ມະນີວອນ ທີແກ້ວ,
MD, MPH, Ph.D.

ບ້ານ ໂພນຕ້ອງ ສາຫວາດ, ເມືອງ ຈັນທະບູລີ
ໂທ: 020 59536080
ວັດແອບ: 59536080
ກວດກາພະຍາດລະບົບ ປະສາດສະໝອງ, ສຸຂະພາບຈິດ, ສິ່ງເສບຕິດສຳຫຼັບ ເດັກ ແລະ ຜູ້ໃຫ່ຍ. ກວດບົ່ງມະຕິ ແລະ ໃຫ້ຄຳປຶກສາ ສຳຫຼັບເດັກພັດທະນາການຊ້າ ແລະ ຜິດປົກະຕິທາງສະໝອງ, ເດັກມີບັນຫາດ້ານການຮຽນແລະການປະພຶດແກ່ແພດໝໍ, ຜູ້ປົກຄອງ ແລະ ໂຮງຮຽນ.

### ສະມາຄົມເພື່ອຄົນໂອທິສຕິກ (AfA)
ສູນເພື່ອຄົນໂອທິສຕິກ ວຽງຈັນ (VAC)

ບ້ານໂພນປ່າເປົ້າ, ເມືອງສີສັດຕະນາກ
ໂທ: 021 480 488, 020 55918117
ອີເມວ: vac@laoautism.org

- ສະໜອງການສຶກສາແບບພິເສດ
- ສົ່ງເສີມການສຶກສາແບບຮຽນຮ່ວມ
- ຝຶກວິຊາຊີບ

### ໂຮງໝໍເດັກ - ຫ້ອງພັດທະນາການເດັກ
ບ້ານໂພນສະຫວ່າງ, ເມືອງໄຊ
ໂທ: 030 5988526

- ກວດພັດທະນາການເດັກ ທົ່ວໄປ
- ປຶກສາຫາລືກັບພໍ່ແມ່ຜູ້ປົກຄອງ ເພື່ອນຳສົ່ງເດັກໄປບົ່ງມະຕິກັບຜູ້ຊ່ຽວຊານ
- ເຄືອຂ່າຍຜູ້ປົກຄອງ

### ສູນການແພດຟື້ນຟູໜ້າທີ່ການ
**ພະແນກຟື້ນຟູເດັກ**

ບ້ານ ສີເມືອງ, ເມືອງ ສີສັດຕະນາກ
ໂທ: 021 214044
ອີເມວ: cmrlao@cmrlao.org

ຂະແໜງຟື້ນຟູຝຶກແອບທາງດ້ານລະບົບປະສາດ ປະກອບດ້ວຍ
- ໜ່ວຍງານເດັກພິການທາງສະໝອງ
- ໜ່ວຍງານເດັກAutistic
- ໜ່ວຍງານກິດຈະກຳບຳບັດ

ຂະແໜງຟື້ນຟູຝຶກແອບສະເພາະທາງປະກອບມີ
- ໜ່ວຍງານຝຶກເວົ້າ
- ໜ່ວຍງານກວດຫູສົມທົບໃສ່ເຄື່ອງຊ່ວຍຟັງ ແລະ ຜະລິດເບົ້າຫູທຽມ
- ໜ່ວຍງານຈິດຕະບຳບັດ
- ໜ່ວຍງານສັງຄົມສົງເຄາະ

### ສູນການແພດອາລີອັນ
*http://www.aimclao.com/pediatrics-and-child-development-clinic*

ບ້ານວັດໄຕທົ່ງ, ເມືອງສີໂຄດຕະບອງ
ໂທ: 021 513 095
ອີເມວ: info@aimclao.com

- ກວດພັດທະນາການເດັກ ທົ່ວໄປ
- ກວດຫາອາການເດັກໂອທິສຕິກ

## ຫຼວງພະບາງ

### ໂຮງໝໍເພື່ອນລາວ ສຳຫຼັບເດັກນ້ອຍ
ບ້ານພູໝອກ, ເມືອງຫຼວງພະບາງ
ໂທ: 071 254247

- ກວດພັດທະນາການເດັກ ທົ່ວໄປ
- ປຶກສາຫາລືກັບພໍ່ແມ່ຜູ້ປົກຄອງ ເພື່ອນຳສົ່ງເດັກໄປບົ່ງມະຕິກັບຜູ້ຊ່ຽວຊານ
- ເຄືອຂ່າຍຜູ້ປົກຄອງ

## ສະຫວັນນະເຂດ

### ສະມາຄົມເພື່ອຄົນໂອທິສຕິກ (AfA),
ກຸ່ມຜູ້ປົກຄອງສະຫວັນນະເຂດ

ໂທ: 020 2273 0055
ອີເມວ: savannakhet@laoautism.org

- ປຶກສາຫາລືກັບພໍ່ແມ່ຜູ້ປົກຄອງ ເພື່ອນຳສົ່ງເດັກໄປບົ່ງມະຕິກັບຜູ້ຊ່ຽວຊານ
- ໃຫ້ຄຳປຶກສາແກ່ພໍ່ແມ່ຜູ້ປົກຄອງກ່ຽວກັບການນຳໃຊ້ເຕັກນິກໃນການສອນລູກ

## ປາກເຊ

### ສະມາຄົມເພື່ອຄົນໂອທິສຕິກ (AfA),
ສາຂາ ແຂວງ ຈຳປາສັກ

ບ້ານສະໜາມໄຊ, ເມືອງປາກເຊ
ໂທ: 030 9960226
ອີເມວ: champasak@laoautism.org
20 2273 0055

- ປຶກສາຫາລືກັບພໍ່ແມ່ຜູ້ປົກຄອງ ເພື່ອນຳສົ່ງເດັກ ໄປບົ່ງມະຕິກັບຜູ້ຊ່ຽວຊານ,
- ໃຫ້ຄຳປຶກສາແກ່ພໍ່ແມ່ຜູ້ປົກຄອງກ່ຽວກັບການນຳໃຊ້ເຕັກນິກໃນການສອນລູກ

### ສະມາຄົມເພື່ອຄົນໂອທິສຕິກ (AfA),
ສູນເພື່ອຄົນໂອທິສຕິກ ປາກເຊ (PAC)

ບ້ານສະໜາມໄຊ, ເມືອງປາກເຊ
ໂທ: 030 9960226
ອີເມວ: vac@laoautism.org

- ສະໜອງການສຶກສາແບບພິເສດ
- ສົ່ງເສີມການສຶກສາແບບຮຽນຮ່ວມ

---

ສະມາຄົມເພື່ອຄົນໂອທິສຕິກ

Association for Autism

ຄົນໂອທິສຕິກ

www.facebook.com/laoautism.laa

ສະມາຄົມເພື່ອຄົນໂອທິສຕິກ ແມ່ນສະມາຄົມທີ່ບໍ່ຫວັງຜົນກຳໄລ ສ້າງຕັ້ງ ແລະ ດຳເນີນງານໂດຍຜູ້ປົກຄອງເດັກໂອທິສຕິກ. ສະມາຄົມເພື່ອຄົນໂອທິສຕິກ ໄດ້ຮັບອານຸຍາດສ້າງຕັ້ງ ຈາກກະຊວງພາຍໃນ ຕາມໃບອານຸຍາດເລກທີ 136/ພນ ລົງວັນທີ 15\3\2012.
ສະມາຄົມເພື່ອຄົນໂອທິສຕິກດຳເນີນງານຕາມ ວິໄສທັດ ຂອງຕົນ:

ບຸກຄົນໂອທິສຕິກສາມາດດຳລົງຊີວິດຢ່າງມີຄວາມໝາຍໃນ
ສະພາບແວດລ້ອມທີ່ອົບອຸ່ນ ແລະ ເຕັມໄປດ້ວຍຄວາມເຫັນອົກເຫັນໃຈ

ສະມາຄົມເພື່ອຄົນໂອທິສຕິກ ເປັນຜູ່ດຳເນີນການ ແລະ ຄຸ້ມຄອງ ສູນເພື່ອຄົນໂອທິສຕິກ ຢູ່ນະຄອນຫຼວງ ວຽງຈັນ ແລະ ຢູ່ ປາກເຊ.